

# USAID LAOS COUNTER TRAFFICKING IN PERSONS

USAID Laos Counter Trafficking in Persons (USAID Laos CTIP), a five-year project funded by the U.S. Agency for International Development, works to reduce the vulnerability to human trafficking among targeted populations by supporting vocational training and employment opportunities of targeted vulnerable populations.

Lao PDR is a source and to a lesser extent, a transit and destination country for women, children and men subjected to sex trafficking and forced labor. Lao trafficking victims, especially from the southern region of the country, are often migrants seeking opportunities abroad who then experience labor or sexual exploitation in destination countries—most often Thailand, as well as Indonesia and China.

PHOTO: ATHIT CHANTHALATH

## REDUCING VULNERABILITY

USAID Laos CTIP works with law enforcement officers to reduce the vulnerability to human trafficking among targeted populations by supporting vocational training and employment opportunities of vulnerable populations, particularly survivors of human trafficking to prevent their re-trafficking. These efforts will in turn showcase a model of prevention and protection for the Government of Lao PDR to learn from, support and sustain as it builds its response to counter human trafficking through the implementation of related national laws, policies and programs, as well as providing high quality support services to trafficked persons.

The USAID Laos CTIP approach is based on consultations with the Government of Lao PDR and complements other ongoing government initiatives to respond to human trafficking.

## ANTICIPATED OUTCOMES

The USAID Laos Counter Trafficking in Persons activity:

- Strengthens the Government of Lao PDR to lead anti-human trafficking efforts
- Increases access to economic opportunities and employment among target vulnerable populations
- Increases access to support and services among trafficked persons

**PARTNER:** USAID partners with Winrock International to support the Government of Lao PDR to lead its own anti-human trafficking efforts in the Lao PDR.

## CONTACTS


**USAID Laos**
Patrick Bowers
Agreement Officer's Representative
U.S. Embassy Vientiane
KM9 Thadeua Road
PO Box 114, Vientiane, Lao PDR
www.usaid.gov/laos

**Winrock International**
Dr. Xoukiet Panyanouvong (MD)
Chief of Party
House no. 429, Unit 41, 4th Floor (EDC)
Green Building, Naxay Village, Saysettha District Vientiane Capital, Lao PDR, P.O. Box 9997
Tel: +85621 454 923-4
www.winrock.org
Email: Xoukiet.panyanouvong@winrock.org



# ໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ (USAID LAOS CTIP)

ໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ (USAID Laos CTIP), ແມ່ນໂຄງການໄລຍະ 5 ປີ ທີ່ໄດ້ຮັບການສະໜັບສະໜູນທຶນຈາກ ອົງການພັດທະນາສາກົນ ຂອງປະເທດສະຫະລັດອາເມລິກາ (USAID), ກິດຈະກຳຂອງໂຄງການແມ່ນ ສຸມໃສ່ເພື່ອຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ໃນບັນດາກຸ່ມປະຊາກອນເປົ້າໝາຍ ໂດຍສະໜັບສະໜູນ ການຝຶກອົບຮົມວິຊາຊີບ ແລະ ຊອກຫາໂອກາດການເຮັດວຽກ ໃຫ້ແກ່ປະຊາຊົນກຸ່ມສ່ຽງທີ່ເປັນເປົ້າໝາຍ.

ສປປ ລາວ ເປັນປະເທດ ຕົ້ນທາງ, ທາງຜ່ານ ແລະ ປາຍທາງ ສຳລັບການຄ້າມະນຸດ ແມ່ຍິງ, ເດັກນ້ອຍ ແລະ ເພດຊາຍ ສ່ວນຫຼາຍ ຖືກຕົວະຍົວະ ເຂົ້າສູ່ຂະບວນການຄ້າມະນຸດ ເພື່ອບັງຄັບໃຊ້ແຮງງານ ແລະ ຂາຍບໍລິການທາງເພດ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເຄີຍຖືກກົດຂີ່ຂູດຮີດດ້ານແຮງງານ ແລະ ຖືກບັງຄັບໃຫ້ຂາຍບໍລິການທາງເພດ ໃນບັນດາປະເທດປາຍທາງ ສ່ວນຫຼາຍແມ່ນມາຈາກບັນດາແຂວງທາງພາກໃຕ້ຂອງປະເທດລາວ ເຊິ່ງປົກກະຕິແລ້ວພວກເຂົາຈະເປັນກຸ່ມແຮງງານເຄື່ອນຍ້າຍ ທີ່ໄປຊອກເຮັດວຽກຢູ່ຕ່າງປະເທດ - ສ່ວນໃຫຍ່ແລ້ວ ແມ່ນ ປະເທດໄທ, ອິນໂດເນເຊຍ ແລະ ຈີນ.

## ການຫຼຸດຜ່ອນ ຄວາມສ່ຽງ

ໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ (USAID Laos CTIP) ເຮັດວຽກຮ່ວມກັບອຳນາດການປົກຄອງທ້ອງຖິ່ນ, ຜູ້ບັງຄັບໃຊ້ກົດໝາຍ ເພື່ອປ້ອງກັນ ແລະ ສະກັດກັ້ນການຄ້າມະນຸດ ໃນປະຊາຊົນກຸ່ມສ່ຽງ ໂດຍສົ່ງເສີມການຝຶກອົບຮົມວິຊາຊີບ ແລະ ສ້າງໂອກາດໃນການເຮັດວຽກໃຫ້ແກ່ຜູ້ທີ່ມີຄວາມສ່ຽງ ໂດຍສະເພາະຜູ້ທີ່ເຄີຍຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອປ້ອງກັນບໍ່ໃຫ້ເຂົາເຈົ້າກັບຄືນໄປເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດອີກ. ຄວາມພະຍາຍາມເຫຼົ່ານີ້ ຈະສະແດງໃຫ້ເຫັນຮູບແບບການປ້ອງກັນທີ່ເປັນຕົວແບບ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ເພື່ອໃຫ້ລັດຖະບານ ສປປ ລາວ ໄດ້ຄົ້ນຄວ້າ, ຜັນຂະຫຍາຍ ແລະ ສ້າງຄວາມຍືນຍົງໃຫ້ແກ່ ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ. ວິທີການຈັດຕັ້ງປະຕິບັດ ໂຄງການ USAID Laos CTIP ແມ່ນອີງໃສ່ ການປຶກສາຫາລື-ເຮັດວຽກຮ່ວມກັບລັດຖະບານ ສປປ ລາວ ໂດຍປະກອບສ່ວນສົມທົບຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆຂອງລັດຖະບານທີ່ພວມດຳເນີນຢູ່ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ.

# ຄາດຫວັງຜົນໄດ້ຮັບ

ກິດຈະກຳຂອງໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ (USAID Laos CTIP):

- ສະໜັບສະໜູນລັດຖະບານ ສປປ ລາວ ໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
- ເພີ່ມການເຂົ້າເຖິງໂອກາດທາງດ້ານເສດຖະກິດ ແລະ ສ້າງອາຊີບໃຫ້ບັນດາປະຊາກອນຜູ້ມີຄວາມສ່ຽງ ໃນພື້ນທີ່ເປົ້າໝາຍ.
- ເພີ່ມທະວີການຊ່ວຍເຫຼືອໃຫ້ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ຄູ່ຮ່ວມງານ:** ອົງການພັດທະນາສາກົນ ຂອງປະເທດສະຫະລັດອາເມລິກາ (USAID) ຮ່ວມງານກັບ ອົງການວິນຣອກສາກົນ (Winrock International) ເພື່ອສະໜັບສະໜູນລັດຖະບານລາວໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃນ ສປປ ລາວ.

# ຕິດຕໍ່ພົວພັນ

ອົງການ USAID ປະຈຳລາວ
Patrick Bowers
ຜູ້ຮັບຜິດຊອບໂຄງການ
ສະຖານທູດອາເມລິກາ ປະຈຳລາວ
KM9 ຖະໜົນທ່າເດື່ອ
ຕູ້ ປນ 114, ນະຄອນຫຼວງວຽງຈັນ, ສປປ ລາວ
www.usaid.gov/laos

ອົງການ Winrock International
ດຣ. ຊູກຽດ ປັນຍານຸວົງ (MD)
ຫົວໜ້າໂຄງການ

ເຮືອນເລກທີ. 429, ໜ່ວຍ 41, ຊັ້ນ 5 ອາຄານສີຊຽວ,
ບ້ານນາໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ, ຕູ້ ປນ 9997

ໂທລະສັບ: +85621 454 923-4
Email: Xoukiet.panyanouvong@winrock.org
www.winrock.org